ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 02 ປປທ

ລົງວັນທີ 18 ພະຈິກ 2009

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສໍາປະທານທີ່ດິນຂອງລັດ

----------------

- ອີງຕາມລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 2 ສະບັບປັບປຸງ;
- ອີງຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;
- ອີງຕາມກົດໝາຍວ່າດ້ວຍຊັບສິນ ຂອງລັດ ສະບັບເລກທີ 09/ສພຊ, ລົງວັນທີ 12 ຕຸລາ 2002;
- ອີງຕາມກົດໝາຍວ່າດ້ວຍບໍ່ແຮ່ ສະບັບເລກທີ 04/97/ສພຊ, ລົງວັນທີ 12 ເມສາ1997;
- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ສະບັບເລກທີ 01/99/ສພຊ, ລົງວັນ 3/4/1999;
- ອີງຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 10/ສພຊ, ລົງວັນທີ 09 ພະຈິກ 2005;
- ອີງຕາມກົດໝາຍວ່າດ້ວຍກິລາ-ກາຍຍະກໍາ ສະບັບເລກທີ 11 /ສພຊ, ລົງວັນທີ 25 ທັນວາ 2007;
- ອີງຕາມ ກົດໝາຍວ່າດ້ວຍກະສິກໍາ ສະບັບເລກທີ ເລກທີ 01/98 ສພຊ, ລົງວັນທີ 10/10/1998;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ປີ 2009;
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 60/ຄປຈ.ສພຊ, ລົງວັນທີ 20 ຕຸລາ 2009

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ :**

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນ ຂອງລັດ, ກຳນົດຫລັກການ, ມາດຕະການປະຕິບັດ ເພື່ອຄວາມເປັນເອກະພາບໃນຂອບເຂດທົ່ວປະເທດແນໃສ່ເຮັດໃຫ້ການຄຸ້ມຄອງ, ການພັດທະນາ, ການປົກປັກຮັກສາ ແລະການນຳໃຊ້ທີ່ດິນ ຂອງລັດມີປະສິດທິຜົນ, ສາມາດຫັນທີ່ດິນເປັນທຶນທັງເປັນການສົ່ງເສີມການລົງທຶນ ແລະສ້າງແຫລ່ງລາຍຮັບເຂົ້າງົບປະມານແຫ່ງລັດ.

**ມາດຕາ 2. ຄ່າເຊົ່າ ແລະຄ່າສຳປະທານທີ່ດິນ ຂອງລັດ**

ຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດແມ່ນການກຳນົດອັດຕາເກັບຈາກການໃຫ້ເຊົ່າ ແລະການໃຫ້ສຳປະທານ ເພື່ອດຳເນີນກິດຈະການໃດໜຶ່ງ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

ຄ່າເຊົ່າທີ່ດິນຂອງລັດໝາຍເຖິງລາຍຮັບທີ່ດິນ ທີ່ໄດ້ຈາກຜູ້ເຊົ່າທີ່ດິນຂອງລັດ ເພື່ອດຳເນີນກິດຈະການອຸດສາຫະກຳ, ກິດຈະການການບໍລິການໃນເຂດທ່ອງທ່ຽວ, ກິດຈະການການບໍລິການ, ທີ່ຢູ່ອາໄສ ແລະ ການກໍ່ສ້າງສະໜາມກິລາ.

ຄ່າສຳປະທານທີ່ດິນ ຂອງລັດໝາຍເຖິງລາຍຮັບທີ່ດິນ ທີ່ໄດ້ຈາກຜູ້ສຳປະທານທີ່ດິນ ຂອງລັດ ເພື່ອດຳເນີນກິດຈະການກະສິກຳ, ກິດຈະການປູກໄມ້, ກິດຈະການບໍ່ແຮ່, ກິດຈະການກາຊີໂນ ແລະການສ້າງພື້ນຖານໂຄງລ່າງເຂດເສດຖະກິດສະເພາະ.

ສຳລັບກິດຈະການທີ່ໄດ້ຮັບການສົ່ງເສີມໃຫ້ຍົກເວັ້ນຄ່າເຊົ່າ ແລະຄ່າສຳປະທານທີ່ດິນ ຂອງ ລັດແມ່ນໃຫ້ເສຍຄ່າເຊົ່າ ແລະ ຄ່າສຳປະທານ ຫລັງຈາກໝົດກຳນົດເວລາຍົກເວັ້ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 3. ຫລັກການກຳນົດຄ່າເຊົ່າ ແລະ ສຳປະທານທີ່ດິນຂອງລັດ**

ການກຳນົດຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດແມ່ນອີງໃສ່ທີ່ຕັ້ງທາງດ້ານພູມສາດ, ສະພາບເສດຖະກິດ - ສັງຄົມຂອງແຕ່ລະເຂດ ແລະ ອີງໃສ່ນະໂຍບາຍສົ່ງເສີມຂອງລັດຕາມໂຄງປະກອບຂະແໜງການເສດຖະກິດ ຊຶ່ງແບ່ງອອກເປັນ 3 ເຂດ ຄື:

ເຂດ 1 : ເຂດພູດອຍ, ພູພຽງ, ທົ່ງພຽງ ທີ່ບໍ່ມີພື້ນຖານໂຄງລ່າງເສດຖະກິດ ທີ່ອຳນວຍແກ່ການລົງທຶນ.

ເຂດ 2 : ເຂດພູດອຍ, ພູພຽງ, ທົ່ງພຽງ ທີ່ມີພື້ນຖານໂຄງລ່າງເສດຖະກິດ ສາມາດຮອງຮັບການລົງທຶນໄດ້ສ່ວນໃດສ່ວນໜຶ່ງແລ້ວ.

ເຂດ 3 : ເຂດພູດອຍ, ພູພຽງ, ທົ່ງພຽງ ທີ່ມີພື້ນຖານໂຄງລ່າງຮອງຮັບການລົງທຶນໄດ້ດີແລ້ວ.

ສຳລັບການສຳປະທານທີ່ດິນເພື່ອກິດຈະການບໍ່ແຮ່ ແມ່ນໃຫ້ປະຕິບັດຕາມມາດຕາ 12 ຂອງລັດຖະບັນຍັດສະບັບນີ້ .

**ມາດຕາ 4. ການເສຍຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນ ຂອງລັດ**

ບຸກຄົນ ຫລື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ເຊົ່າ ຫລື ສຳປະທານທີ່ດິນ ຂອງລັດຕ້ອງເສຍຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຕາມອັດຕາທີ່ຕົນປະມູນໄດ້, ອັດຕາເລີ້ມຕົ້ນຕ່ຳສຸດ ຂອງການປະມູນແມ່ນໃຫ້ເລີ່ມຈາກອັດຕາທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດສະບັບນີ້.

ອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນ ຂອງລັດ ທີ່ກຳນົດຢູ່ໃນລັດຖະບັນຍັດສະບັບນີ້ເປັນອັດຕາຕ່ຳສຸດ, ບຸກຄົນ ຫລື ນິຕິບຸກຄົນໃດຫາກໃຫ້ລາຄາສູງກວ່ານີ້ ດ້ວຍຮູບການປະມູນມອບໃຫ້ລັດຖະບານເປັນຜູ້ພິຈາລະນາຕົກລົງ.

ຄ່າເຊົ່າ ຫລື ຄ່າສຳປະທານທີ່ດິນຂອງລັດ ທີ່ບຸກຄົນ ຫລື ນິຕິບຸກຄົນປະມູນໄດ້ນັ້ນໃນທຸກໆຫ້າປີໃດແມ່ນໃຫ້ມີການປະເມີນຄືນໃໝ່ ໂດຍອີງໃສ່ສະພາບການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມ ແລະມູນຄ່າທີ່ດິນໃນຂົງເຂດດັ່ງກ່າວ. ໃນກໍລະນີມີການເພີ່ມຄ່າເຊົ່າ ຫລືຄ່າສຳປະທານທີ່ດິນຂອງລັດຕາມທີ່ໄດ້ຕົກລົງໃນສັນຍາ ແມ່ນມອບໃຫ້ລັດຖະບານເປັນຜູ້ພິຈາລະນາຕົກລົງໃນແຕ່ກໍລະນີ.

**ມາດຕາ 5. ຂອບເຂດການນຳໃຊ້ລັດຖະບັນຍັດ**

ລັດຖະບັນຍັດສະບັບນີ້ ມີຜົນນຳໃຊ້ສະເພາະສຳລັບການເກັບຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດເທົ່ານັ້ນ.

## ພາກທີ II
## ການກຳນົດອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ

### ໝວດທີ I
### ອັດຕາຄ່າເຊົ່າທີ່ດິນຂອງລັດເພື່ອກິດຈະການຕ່າງໆ

**ມາດຕາ 6. ອັດຕາຄ່າເຊົ່າທີ່ດິນຂອງລັດ ເພື່ອກິດຈະການອຸດສາຫະກຳ**

ການເຊົ່າທີ່ດິນຂອງລັດ ເພື່ອກິດຈະການອຸດສະຫະກຳ ໃຫ້ເກັບຕາມອັດຕາດັ່ງນີ້ :

| ລ/ດ | ເປົ້າໝາຍຂອງການເຊົ່າທີ່ດິນຂອງລັດ | ອັດຕາຄ່າເຊົ່າຕໍ່ ເຮັກຕາ ຕໍ່ປີເປັນຫົວໜ່ວຍໂດລາສະຫະລັດ | | |
|---|---|---|---|---|
| | | ເຂດທີ 1 | ເຂດທີ 2 | ເຂດທີ 3 |
| 1 | ໂຮງງານການຜະລິດຢາປົວພະຍາດ, ຜະລິດອຸປະກອນການແພດ, ຜະລິດຕະພັນ ເພື່ອສຸຂະອະນາໄມ | 100 | 200 | 300 |
| 2 | ໂຮງງານອຸປະກອນການສຶກສາ, ເຄື່ອງກິລາ, ເຄື່ອງດົນຕີ, ເຄື່ອງຫລິ້ນເດັກ | 100 | 200 | 400 |
| 3 | ໂຮງພິມຈຳໜ່າຍ ແລະ ສື່ສິ່ງພິມ | 100 | 200 | 400 |

| | | | | |
|---|---|---|---|---|
| 4 | ໂຮງງານຜະລິດເຄື່ອງກໍ່ສ້າງຕ່າງໆ | 100 | 200 | 400 |
| 5 | ເຮືອນຈັກໄຟຟ້າພະລັງນ້ຳ, ສະຖານີແຈກໄຟຟ້າ | 100 | 300 | 500 |
| 6 | ໂຮງງານຂ້າສັດ, ປຸງແຕ່ງສະບຽງອາຫານ, ເຄື່ອງດື່ມທີ່ບໍ່ມີທາດເຫລົ້າ, ຜະລິດຕະພັນກະສິກຳ, ຜະລິດເຄື່ອງມືກະສິກຳ, ຫັດຖະກຳ, | 100 | 200 | 300 |
| 7 | ໂຮງງານຜະລິດເສັ້ນດ້າຍ, ເສັ້ນໃຍ, ແຜ່ນແພ ແລະຕັດຫຍິບ | 200 | 300 | 600 |
| 8 | ໂຮງງານຜະລິດເຄື່ອງໃຊ້ຫ້ອງການ, ເຄື່ອງຈັກສະໜອງກົນ | 200 | 300 | 600 |
| 9 | ໂຮງງານຜະລິດເຄື່ອງກົນຈັກ, ພາຫະນະຂົນສົ່ງ ແລະ ອາໄຫຼ່ | 200 | 300 | 600 |
| 10 | ໂຮງງານຜະລິດ ແລະ ປະກອບເຄື່ອງຈັກ, ອຸປະກອນ ແລະເຄື່ອງໃຊ້ໄຟຟ້າ, ວິທະຍຸ, ໂທລະພາບ, ເຄື່ອງອຸປະກອນການສື່ສານ | 200 | 400 | 600 |
| 11 | ໂຮງງານໄຟຟ້າຖ່ານຫີນ | 200 | 400 | 600 |
| 12 | ໂຮງງານປຸງແຕ່ງທາດອະໂລຫະ, ເຊື້ອໄຟ, ຖ່ານຫີນ ແລະ ປຸງແຕ່ງໂລຫະຂັ້ນຕົ້ນ, ຜະລິດຕະພັນໂລຫະ ແລະໂຮງງານຜະລິດຊີມັງ | 200 | 400 | 600 |
| 13 | ໂຮງງານປຸງແຕ່ງຢາງໄມ້, ຜະລິດເຈ້ຍ, ໜັງສັດ | 200 | 300 | 400 |
| 14 | ໂຮງງານກ່ຽວກັບການປຸງແຕ່ງຄືນໃໝ່ | 100 | 200 | 400 |
| 15 | ໂຮງງານປຸງແຕ່ງເຄມີ, ຜະລິດຕະພັນເຄມີ, ຜະລິດຕະພັນປລາສະຕິກ | 500 | 800 | 1000 |
| 16 | ໂຮງງານປຸງແຕ່ງໄມ້ ແລະຜະລິດຕະພັນ ທີ່ເຮັດຈາກໄມ້ ແລະ ຫວາຍ, ເຟີນິເຈີ | 500 | 1000 | 2000 |
| 17 | ໂຮງງານປຸງແຕ່ງຜະລິດຕະພັນຢາສູບ ແລະ ເຄື່ອງດື່ມປະເພດມີທາດເຫລົ້າ | 1000 | 2000 | 3000 |

ສຳລັບຄ່າເຊົ່າທີ່ດິນຂອງລັດ ເພື່ອຂໍຜ່ານແລວສາຍສົ່ງໄຟຟ້າແຮງສູງແມ່ນມອບໃຫ້ລັດຖະບານເປັນຜູ້ຕົກລົງຕາມແຕ່ລະກໍລະນີ. ສ່ວນແລວສາຍສົ່ງໄຟຟ້າແຮງສູງຂອງຜູ້ລົງທຶນທີ່ໄດ້ສ້າງເຂື່ອນໄຟຟ້າຢູ່ ສປປ ລາວ ແມ່ນໃຫ້ຍົກເວັ້ນຄ່າເຊົ່າທີ່ດິນ.

**ມາດຕາ 7. ອັດຕາຄ່າເຊົ່າທີ່ດິນຂອງລັດຮັບໃຊ້ກິດຈະການ ການບໍລິການໃນເຂດທ່ອງທ່ຽວ**

ການເຊົ່າທີ່ດິນຂອງລັດ ຮັບໃຊ້ກິດຈະການບໍລິການ ໃນເຂດທ່ອງທ່ຽວວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດ ໃຫ້ເກັບຕາມອັດຕາດັ່ງນີ້ :

| ລ/ດ | ເຂດທ່ອງທ່ຽວ | ອັດຕາຄ່າເຊົ່າຕໍ່ ເຮັກຕາ ຕໍ່ປີເປັນຫົວໜ່ວຍໂດລາສະຫະລັດ | | |
|---|---|---|---|---|
| | | ເຂດທີ 1 | ເຂດທີ 2 | ເຂດທີ 3 |
| 01 | ລະດັບບ້ານ | 70 | 100 | 200 |
| 02 | ລະດັບເມືອງ | 100 | 200 | 300 |
| 03 | ລະດັບແຂວງ | 200 | 300 | 400 |
| 04 | ລະດັບຊາດ | 300 | 400 | 500 |

**ມາດຕາ 8. ອັດຕາຄ່າເຊົ່າທີ່ດິນຂອງລັດ ເພື່ອກໍ່ສ້າງກິດຈະການ ການບໍລິການ ແລະ ທີ່ຢູ່ອາໄສ**

ການເຊົ່າທີ່ດິນຂອງລັດເພື່ອກໍ່ສ້າງກິດຈະການ ການບໍລິການ ແລະທີ່ຢູ່ອາໄສໃຫ້ເກັບຕາມອັດຕາດັ່ງນີ້ :

| ລ/ດ | ເປົ້າໝາຍການເຊົ່າທີ່ດິນຂອງລັດ | ອັດຕາຄ່າເຊົ່າທີ່ດິນຕໍ່ ເຮັກຕາ ຕໍ່ປີເປັນຫົວໜ່ວຍໂດລາສະຫະລັດ | | |
|---|---|---|---|---|
| | | ເຂດທີ 1 | ເຂດທີ 2 | ເຂດທີ 3 |
| 1 | ກິດຈະການບໍລິການທີ່ມີລັກສະນະ ເພື່ອສາທາລະນະປະໂຫຍດ ເຊັ່ນ: ສວນສາທາລະນະ, ໂຮງຮຽນ, ໂຮງໝໍ, ສະໜາມເດັກຫຼິ້ນ, ແລະ ສູນຟື້ນຟູສຸຂະພາບ | 100 | 300 | 500 |
| 2 | ປຸກສ້າງເຮືອນ ແລະ ອາຄານ ເພື່ອເປັນບ່ອນຢູ່ອາໄສ | 300 | 500 | 1.000 |
| 3 | ກິດຈະການບໍລິການທີ່ມີລັກສະນະສ່ວນບຸກຄົນ ເຊັ່ນ: ທະນາຄານ, ຮ້ານສັບພະສິນຄ້າ. | 500 | 10.000 | 50.000 |
| 4 | ກິດຈະການກໍ່ສ້າງບ້ານຈັດສັນ, ເຮືອນພັກ, ຮ້ານອາຫານ, ພັດທະຄານ, ສູນປະຊຸມ, ຫ້ອງການ | 1.000 | 5.000 | 10.000 |
| 5 | ກິດຈະການພັດທະນາໂຄງລ່າງເຊັ່ນ: ໂທລະຄົມມະນາຄົມ, ຕະຫຼາດ, ສະຖານີຈອດລົດຜູ້ໂດຍສານ, ສະຖານີຂົນສົ່ງສິນຄ້າ ແລະລະບົບສາງສິນຄ້າ | 3.000 | 5.000 | 10.000 |
| 6 | ກິດຈະການບໍລິການທີ່ມີລັກສະນະສ່ວນບຸກຄົນເຊັ່ນ : ໂຮງແຮມ, ລີສອ໋ດ, ສະຖານທີ່ບັນເທີງ | 5.000 | 30.000 | 70.000 |

**ມາດຕາ 9. ອັດຕາຄ່າເຊົ່າທີ່ດິນຂອງລັດ ເພື່ອກໍ່ສ້າງສະໜາມກິລາ**

ການເຊົ່າທີ່ດິນຂອງລັດ ເພື່ອກໍ່ສ້າງສະໜາມກິລາ ໃຫ້ເກັບຕາມອັດຕາດັ່ງນີ້ :

| ລ/ດ | ເປົ້າໝາຍຂອງການເຊົ່າທີ່ດິນຂອງ ລັດ | ອັດຕາຄ່າເຊົ່າທີ່ດິນຕໍ່ ເຮັກຕາ ຕໍ່ປີເປັນຫົວໜ່ວຍໂດລາສະຫະລັດ | | |
|---|---|---|---|---|
| | | ເຂດທີ 1 | ເຂດທີ 2 | ເຂດທີ 3 |
| 1 | ສ້າງກິດຈະການສະໜາມກິລາທົ່ວໄປ | 50 | 150 | 250 |
| 2 | ສ້າງກິດຈະການສະໜາມແຂ່ງມ້າ, ແຂ່ງລົດທຸກປະເພດ | 100 | 150 | 200 |
| 3 | ສ້າງກິດຈະການສະໜາມກ໋ອບ | 150 | 250 | 450 |

## ໝວດທີ II
## ອັດຕາຄ່າສຳປະທານທີ່ດິນຂອງລັດເພື່ອກິດຈະການຕ່າງໆ

**ມາດຕາ 10. ອັດຕາຄ່າສຳປະທານທີ່ດິນຂອງລັດ ເພື່ອກິດຈະການກະສິກຳ.**

ການສຳປະທານທີ່ດິນຂອງລັດ ເພື່ອກິດຈະການກະສິກຳ ໃຫ້ເກັບຕາມອັດຕາດັ່ງນີ້ :

| ລ/ດ | ເປົ້າໝາຍຂອງການສຳປະທານທີ່ດິນຂອງລັດ | ອັດຕາຄ່າສຳປະທານທີ່ດິນຕໍ່ ເຮັກຕາ ຕໍ່ປີເປັນຫົວໜ່ວຍໂດລາສະຫະລັດ | | |
|---|---|---|---|---|
| | | ເຂດທີ 1 | ເຂດທີ 2 | ເຂດທີ 3 |
| 1 | ກິດຈະການປູກພືດລົ້ມລຸກ ແລະພືດສະບຽງອາຫານ | 5 | 10 | 15 |
| 2 | ກິດຈະການລ້ຽງສັດໃຫ່ຍເຊັ່ນ : ງົວ, ຄວາຍ ລວມທັງ ແບ້, ແກະ ແລະອື່ນໆ | 5 | 10 | 20 |
| 3 | ກິດຈະການປູກໄມ້ໃຫ້ໝາກ ແລະ ພືດຍືນຕົ້ນ | 5 | 10 | 20 |
| 4 | ກິດຈະການປູກພືດເສດຖະກິດ | 6 | 10 | 20 |
| 5 | ກິດຈະການປູກເຄື່ອງປ່າຂອງດົງ ແລະ ພືດເປັນຢາ | 7 | 15 | 25 |
| 6 | ກິດຈະການລ້ຽງສັດປີກ ແລະ ສັດນ້ອຍອື່ນໆ | 10 | 15 | 25 |
| 7 | ກິດຈະການລ້ຽງສັດນ້ຳ | 10 | 20 | 30 |

**ມາດຕາ 11. ອັດຕາຄ່າສຳປະທານທີ່ດິນຂອງລັດ ເພື່ອກິດຈະການປູກໄມ້.**

ການສຳປະທານທີ່ດິນຂອງລັດ ເພື່ອກິດຈະການປູກໄມ້ ໃຫ້ເກັບຕາມອັດຕາດັ່ງນີ້ :

| ລ/ດ | ເປົ້າໝາຍຂອງການສຳປະທານທີ່ດິນຂອງລັດ | ອັດຕາຄ່າສຳປະທານທີ່ດິນຕໍ່ ເຮັກຕາ ຕໍ່ປີເປັນຫົວໜ່ວຍໂດລາສະຫະລັດ | | |
|---|---|---|---|---|
| | | ເຂດ 1 | ເຂດ 2 | ເຂດ 3 |
| 1 | ກິດຈະການປູກໄມ້ເສດຖະກິດ 10 ປີຂຶ້ນໄປ | 8 | 15 | 25 |
| 2 | ກິດຈະການປູກໄມ້ໃຫຍ່ໄວ 10 ປີລົງມາ | 10 | 20 | 30 |
| 3 | ກິດຈະການປູກຢາງພາລາ | 30 | 40 | 50 |

**ມາດຕາ 12. ອັດຕາຄ່າສຳປະທານທີ່ດິນຂອງລັດເພື່ອກິດຈະການບໍ່ແຮ່**

ການສຳປະທານທີ່ດິນຂອງລັດ ເພື່ອກິດຈະການບໍ່ແຮ່ ໃຫ້ເກັບຕາມອັດຕາດັ່ງນີ້ :

| ລ/ດ | ປະເພດແຮ່ທາດ | ອັດຕາຄ່າສຳປະທານທີ່ດິນຕໍ່ ເຮັກຕາ ຕໍ່ປີເປັນຫົວໜ່ວຍໂດລາ ສະຫະລັດ | | | |
|---|---|---|---|---|---|
| | | ຂຸດຄົ້ນ | ສຳຫຼວດ | ວິພາກເສດຖະກິດ-ເຕັກນິກ | ຂຸດຄົ້ນ |
| 1 | ກຸ່ມແກ້ວປະເສີດ ແລະ ເຄິ່ງແກ້ວປະເສີດ: Precious and Semi-Precious Stones | | | | |
| | • ໂອປານ, ອາກັດ, ອາເມຕິດສ (Opal, Agate, Amethyst) | 1 | 1 | 2 | 300 |
| | • ສະປີແນນ, ກາກເນັດ, ໂຕປາສ | 1 | 1 | 2 | 500 |

| | | | | | |
|---|---|---|---|---|---|
| | (Spinal, Garnit, Topaze.....) | | | | |
| | • ເພັດ, ຣູບີ, ຊັບຟາຍ, ມໍລະກົດ, ຢົກ (Diamond, Ruby, Sapphire, Emerald, jade) | 2 | 2 | 3 | 700 |
| 2 | ກຸ່ມໂລຫະປະເສີດ: (Precious metals)<br>• ຄຳ, ປລາຕິນ (Gold, Platinium)<br>• ເງິນ (Silver) | 1 | 2 | 3 | 100 |
| 3 | ກຸ່ມໂລຫະພື້ນຖານ: Base Metals<br>• ຊືນ, ສັງກະສີ (Lead, Zinc)<br>• ທອງ( Copper) | 1<br>1 | 2<br>2 | 3<br>3 | 60<br>80 |
| 4 | ກຸ່ມກົ່ວ ແລະ ໂວນຟາມ<br>• ແຮ່ກົ່ວ ແລະ ໂວນຟາມ (Tin and Tungsten) | 1 | 2 | 3 | 100 |
| 5 | ກຸ່ມໂລຫະຫາຍາກ: Minor metal<br>• ອັງຕີມອນ, ໂມລິບເດັນ, ບີສມຸດ, ບາຫລອດ, ອາລູມີນຽມ, (Antimony, Molybdenum, Bismuth, Mercury, Aluminum ) | 1 | 2 | 3 | 60 |
| 6 | ກຸ່ມໂລຫະທີ່ພົວພັນກັບເຫລັກ: (Ferrous metals)<br>• ເຫລັກ, ມັງກາແນສ, ພາຍຣາຍ (Iron, Manganese, Pyrite)<br>• ໂຄຼມ, ນີແກນ,(Chromium, Nickel) | 1<br>1 | 2<br>2 | 3<br>3 | 70<br>80 |
| 7 | ກຸ່ມແຮ່ທາດອຸດສາຫະກຳ (Industrial minerals )<br>• ອາລູນິດ, ອາສເບັດໂຕສ, ບາຣິດ, ຫີນລາຕາລິດ, ດິນກາວແລງ, ຫີນປູນ, ຫີນອອ່ນ<br>(Alunite, Asbestos, Barite, Latalite, Kaolin, Limestone, Marble) | 1 | 2 | 3 | 50 |
| 8 | ຫີນກໍ່ສ້າງ: ( Construction materials)<br>ຫີນຊາຍ, ອັນເດໄຊ, ແກຣນໂນດີໂອໄຊ, ບາຊອນ, ກາໄບສ, | 1 | 2 | 3 | 50 |

| | | | | | |
|---|---|---|---|---|---|
| 9 | ກຸ່ມແຮ່ທາດເກີດດ້ວຍການລະເຫີຍ : (Evaporite Minerals)<br>• ໂປຕັສ ( Potash)<br>• ເກືອກິນ (Halite)<br>• ຫີນກາວ, (Gypsum) | <br><br>0,5<br>0,5<br>1 | <br><br>1<br>1<br>2 | <br><br>3<br>3<br>5 | <br><br>20<br>20<br>30 |
| 10 | ກຸ່ມແຮ່ທາດພະລັງງານເຊື້ອໄຟ: (Energy minerals)<br>• ຖ່ານຕົມ (Peat)<br>• ຖ່ານຫີນ: (Coal)<br>+ ອານຕຣາໄຊ (Anthracite)<br>+ ລິກໄນ (Lignite) | <br>0,5<br><br>1<br>1 | <br>1<br><br>2<br>2 | <br>2<br><br>3<br>3 | <br>30<br><br>70<br>70 |
| 11 | ນ້ຳໃຕ້ດິນ, ນ້ຳແຮ່ທາດ, ນ້ຳຮ້ອນທຳມະຊາດ ( Ground water, mineral water, natural thermal water) | 0,5 | 1 | 3 | 20 |
| 12 | ນ້ຳມັນ ແລະ ອາຍແກັສທຳມະຊາດ<br>Oil and Gas | ອີງຕາມສັນຍາທີ່ໄດ້ເຊັນກັນລະຫວ່າງລັດຖະບານກັບບໍລິສັດ | | | |

ໃນກໍລະນີທາກມີແຮ່ທາດຫລາຍຊະນິດໃນເຂດສຳປະທານ ແມ່ນໃຫ້ຄິດໄລ່ເອົາຕາມແຮ່ທາດ ຫຼັກທີ່ໄດ້ຮັບອະນຸຍາດຈາກລັດຖະບານ.

**ມາດຕາ 13. ອັດຕາຄ່າສຳປະທານທີ່ດິນຂອງລັດເພື່ອກິດຈະການກາຊີໂນ**

ການສຳປະທານທີ່ດິນຂອງລັດ ເພື່ອກິດຈະການກາຊີໂນ ໃຫ້ເກັບຕາມອັດຕາດັ່ງນີ້ :

| ລ/ດ | ເປົ້າໝາຍຂອງການສຳປະທານທີ່ດິນຂອງລັດ | ອັດຕາຄ່າເຊົ່າທີ່ດິນຕໍ່ ເຮັກຕາ ຕໍ່ປີຄິດໄລ່ເປັນຫົວໜ່ວຍໂດລາສະຫະລັດ | | |
|---|---|---|---|---|
| | | ເຂດທີ 1 | ເຂດທີ 2 | ເຂດທີ 3 |
| 1 | ສ້າງກິດຈະການກາຊີໂນ ທຸກປະເພດ | 200.000 | 400.000 | 800.000 |

ການເກັບຄ່າສຳປະທານທີ່ດິນຂອງລັດ ກ່ຽວກັບກິດຈະການກາຊີໂນ ແມ່ນໃຫ້ຄິດໄລ່ຕາມເນື້ອທີ່ສຳປະທານຕົວຈິງທັງໝົດ.

**ມາດຕາ 14. ອັດຕາຄ່າສຳປະທານທີ່ດິນຂອງລັດ ເພື່ອສ້າງພື້ນຖານໂຄງລ່າງເຂດເສດຖະກິດສະເພາະ**

ການສຳປະທານທີ່ດິນຂອງລັດ ເພື່ອສ້າງພື້ນຖານໂຄງລ່າງເຂດເສດຖະກິດສະເພາະ ແມ່ນມອບໃຫ້ລັດຖະບານ ເປັນຜູ້ຕົກລົງຕາມແຕ່ລະກໍລະນີ.

## ພາກທີ III

## ບົດບັນຍັດສຸດທ້າຍ

**ມາດຕາ 15. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ .

ລັດຖະບານມີໜ້າທີ່ອອກຄຳແນະນຳເພີ່ມເຕີມໃນການຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ໄດ້ເຊົ່າ ແລະ ສຳປະທານທີ່ດິນຂອງລັດ ມີໜ້າທີ່ປະຕິບັດລັດຖະບັນຍັດສະບັບນີ້ ຢ່າງເຂັ້ມງວດ.

ຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນ ທີ່ໄດ້ກຳນົດເປັນເງິນຕາຕ່າງປະເທດ ຢູ່ໃນລັດຖະບັນຍັດສະບັບນີ້ ຕ້ອງມອບເຂົ້າງົບປະມານເປັນເງິນກີບ ຫລື ເປັນເງິນຕາຕ່າງປະເທດກໍ່ໄດ້ ໂດຍໃຫ້ຄິດໄລ່ຕາມອັດຕາແລກປ່ຽນການຊື້ເງິນຕາຢູ່ທະນາຄານຂອງລັດ ວາງອອກໃນແຕ່ລະໄລຍະ.

**ມາດຕາ 16. ຜົນສັກສິດ**

ໂຄງການໃດ ທີ່ໄດ້ເຊັນສັນຍາກັບລັດຖະບານກ່ອນລັດຖະບັນຍັດສະບັບນີ້ ຊຶ່ງໄດ້ກຳນົດຄ່າເຊົ່າ ຫລື ຄ່າສຳປະທານທີ່ດິນແລ້ວ ແມ່ນໃຫ້ຄິດໄລ່ເອົາຕາມອັດຕາຄ່າເຊົ່າ ຫລື ຄ່າສຳປະທານຕາມທີ່ໄດ້ລະບຸໄວ້ໃນສັນຍາ.

ໂຄງການໃດ ທີ່ໄດ້ເຊັນສັນຍາກັບລັດຖະບານກ່ອນລັດຖະບັນຍັດສະບັບນີ້, ແຕ່ບໍ່ທັນໄດ້ກຳນົດຄ່າເຊົ່າ ຫລື ຄ່າສຳປະທານທີ່ດິນ ແມ່ນໃຫ້ເຈລະຈາເຮັດສັນຍາໃໝ່ ໂດຍໃຫ້ເອົາອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນ ທີ່ໄດ້ກຳນົດໃນລັດຖະບັນຍັດສະບັບນີ້ ເປັນອັດຕາພື້ນຖານໃນການກຳນົດຄ່າເຊົ່າ ຫລື ຄ່າສຳປະທານທີ່ດິນໃນສັນຍາ.

ໂຄງການໃດ ທີ່ໄດ້ເຊັນສັນຍາກັບລັດຖະບານພາຍຫລັງລັດຖະບັນຍັດສະບັບນີ້ ແມ່ນໃຫ້ປະຕິບັດຕາມມາດຕາ 4 ຂອງລັດຖະບັນຍັດສະບັບນີ້ .

ລັດຖະບັນຍັດສະບັບນີ້ ມີຜົນສັກສິດນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານປະເທດແຫ່ງ ສປປ ລາວ**

ຈູມມາລີ ໄຊຍະສອນ